ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 0804 /ຫຄຊກລ.ຄມ
ນະຄອນຫລວງວຽງຈັນ, ວັນທີ 12 DEC 2022

# ບັນທຶກກອງປະຊຸມ

## ກອງປະຊຸມສະຫຼຸບຜົນສຳເລັດ ກອງປະຊຸມການຄຸ້ມຄອງຂໍ້ມູນ ຂະແໜງການ ລບຕ

## I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ:

ກອງປະຊຸມ ການຄຸ້ມຄອງຂໍ້ມູນ ຂະແໜງການ ລບຕ ໄດ້ໄຂຂຶ້ນ ໃນວັນທີ 29 ພະຈິກ 2022 ເວລາ 8 : 45 – 16:05 ທີ່ ຫ້ອງປະຊຸມໂຮງແຮມວຽງຈັນວຽງຈັນພາຊາ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ, ມີບັນດາຜູ້ເຂົ້າຮ່ວມກອງປະຊຸມຈາກ ພະແນກສະຖິຕິ ກົມແຜນການ ແລະ ການຮ່ວມມື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ, ກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້, ຊ່ຽວຊານຈາກສະຖານທູດອາເມຣິກາ ປະຈຳ ສປປ ລາວ, ຊ່ຽວຊານຈາກສະຫະປະຊາຊາດ, ຊ່ຽວຊານໂຄງການພັດທະນາຄວາມອາດສາມາດການຄຸ້ມຄອງຂໍ້ມູນ, ພະນັກງານຫ້ອງການ ຄຊກລ, ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ລະເບີດມະນຸດສະທຳກອງທັບ 58, ອົງການແມັກ, ອົງການຮາໂລທັດ, ອົງການເອັນພີເອ, ອົງການເຣັດໄອ, ອົງການ ສູນການແພດຟື້ນຟູໜ້າທີ່ການ, ໂຄງການ QLA, ໂຄງການ LDPA, ໂຄງການ LDWDC ແລະ ບໍລິສັດຕ່າງໆ ເຂົ້າຮ່ວມຈຳນວນທັງໝົດ 37 ຄົນ, ຍິງ 10 ຄົນ.

## II. ຈຸດປະສົງ:

- ເພື່ອແລກປ່ຽນຖອດຖອນບົດຮຽນກ່ຽວກັບການຄຸ້ມຄອງຂໍ້ມູນ ຂອງບັນດາກະຊວງ, ອົງການປະຕິບັດງານ ລບຕ ແລະ ບໍລິສັດຕ່າງໆ.
- ເພີ່ມທະວີການມີສ່ວນຮ່ວມ ແລະ ປະສິດທິຜົນຂອງການນຳໃຊ້ຂໍ້ມູນ IMSMA ຂອງຂະແໜງ ການ ລບຕ.

## III. ເນື້ອໃນກອງປະຊຸມ:

ພາຍໃນກອງປະຊຸມໄດ້ນຳສະເໜີກ່ຽວກັບຄວາມຮູ້ພື້ນຖານກ່ຽວກັບໂປຣແກຣມ IMSMA, ຂັ້ນຕອນຂອງຂະບວນການລາຍງານຂໍ້ມູນຂ່າວສານ, ການນຳໃຊ້ເຄື່ອງມື Dashboard ແລະ ການນຳໃຊ້ຂໍ້ມູນເຂົ້າໃນການລາຍງານ.

ນອກຈາກນັ້ນ, ຕາງໜ້າກະຊວງຕ່າງໆ ແລະ ອົງການປະຕິບັດງານ ລບຕ ໄດ້ມີຫົວຂໍ້ນຳສະເໜີ ເພື່ອແລກປ່ຽນຖອດຖອນບົດຮຽນກ່ຽວກັບການຄຸ້ມຄອງຂໍ້ມູນ ລບຕ ເຊັ່ນ:

- ຊ່ຽວຊານໂຄງການພັດທະນາຄວາມອາດສາມາດການຄຸ້ມຄອງຂໍ້ມູນ ນໍາສະເໜີໂຄງການສະໜັບສະໜູນການຄຸ້ມຄອງຂໍ້ມູນໃຫ້ແກ່ ຫ້ອງການ ຄຊກລ ສໍາລັບຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ/ມີນທີ່ຕົກຄ້າງຢູ່ ສປປ ລາວ.
- ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ນໍາສະເໜີກ່ຽວກັບຂໍ້ມູນປະຊາກອນຂອງບ້ານ ແລະ ຂໍ້ມູນບ້ານ, ເມືອງ ແລະ ແຂວງ.
- ກົມພັດທະນາຊົນນະບົດ, ກະຊວງກະສິກໍາ ແລະ ປ່າໄມ້ ນໍາສະເໜີກ່ຽວກັບຈຸດສຸມພັດທະນາ ແລະ ຂໍ້ມູນບ້ານທຸກຍາກ ໃນ ສປປ ລາວ ສະບັບ.
- ອົງການ NPA ນໍາສະເໜີ ໂປຣແກມ ArcGIS Online (NPA), ໂປຣແກມລາຍງານຂໍ້ມູນພາຍໃນອົງກອນ , ໂປຣແກມທີ່ໃຊ້ໃນການວິເຄາະຂໍ້ມູນເກົ່າ (Incomplete Data) ແລະ ເຄື່ອງມືອື່ນໆທີ່ໃຊ້ໃນການເກັບກໍາຂໍ້ມູນ, ວິເຄາະ ແລະ ລາຍງານ.
- ອົງການ HALO Trust ນໍາສະເໜີ ໂປຣແກມ Fulcrum, ໂປຣແກມລາຍງານຂໍ້ມູນພາຍໃນອົງກອນ, ໂປຣແກມທີ່ໃຊ້ໃນການວິເຄາະຂໍ້ມູນເກົ່າ (Incomplete Data) ແລະ ເຄື່ອງມືອື່ນໆທີ່ໃຊ້ໃນການເກັບກາຂໍ້ມູນ, ວິເຄາະ ແລະ ລາຍງານ.
- ອົງການ MAG ນໍາສະເໜີ ການນໍາໃຊ້ ໂປຣແກມ ArcGIS, Google Drive, ໂປຣແກມລາຍງານຂໍ້ມູນພາຍໃນອົງກອນ, ໂປຣແກມທີ່ໃຊ້ໃນການວິເຄາະຂໍ້ມູນເກົ່າ (Incomplete Data) ແລະ ເຄື່ອງມືອື່ນໆທີ່ໃຊ້ໃນການເກັບກໍາຂໍ້ມູນ, ວິເຄາະ ແລະ ລາຍງານ.
- ອົງການ UXO Lao ນໍາສະເໜີ ຂັ້ນຕອນການລາຍງານຂໍ້ມູນ, ລະບົບເຄື່ອງມືທີ່ນໍາໃຊ້, ໂປຣແກມ Google Drive, ໂປຣແກມທີ່ໃຊ້ໃນການວິເຄາະຂໍ້ມູນເກົ່າ (Incomplete Data) ແລະ ເຄື່ອງມືອື່ນໆທີ່ໃຊ້ໃນການເກັບກໍາຂໍ້ມູນ, ວິເຄາະ ແລະ ລາຍງານ.

## IV. ສະຫຼຸບ:

ຫຼັງຈາກພາຍໃນກອງປະຊຸມ ໄດ້ມີການແລກປ່ຽນບົດຮຽນ ໃນການນໍາໃຊ້ເຄື່ອງມື, ຂັ້ນຕອນການວິເຄາະຂໍ້ມູນ, ໄດ້ມີການປຶກສາຫາລື ແລະ ແລກປ່ຽນຄໍາຄິດເຫັນ ທ່ານປະທານກອງປະຊຸມ ໄດ້ສະຫຼຸບ ດັ່ງນີ້:

1. ຂໍ້ມູນການພັດທະນາເສດຖະກິດສັງຄົມ ເຊັ່ນ: ຂໍ້ມູນບ້ານທຸກຍາກ ແລະ ຂໍ້ມູນຈຸດສຸມທີ່ເປັນບຸລິມະສິດລະຫວ່າງສູນກາງ ແລະ ທ້ອງຖິ່ນ ເປັນຂໍ້ມູນທີ່ສໍາຄັນຫຼາຍ ຊ່ວຍໃນການຈັດບຸລິມະສິດໃນການເກັບກູ້ ລບຕ , ສະນັ້ນຈຶ່ງສະເໜີ ໃຫ້ຈັດກອງປະຊຸມ ເພື່ອປຶກສາຫາລືແລກປ່ຽນຂໍ້ມູນກັບ ກົມພັດທະນາຊົນນະບົດ, ກະຊວງກະສິກໍາ ແລະ ປ່າໄມ້.
2. ໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນ ກະກຽມສ້າງແຜນການຝຶກອົບຮົມກ່ຽວກັບການຄຸ້ມຄອງຂໍ້ມູນ ໃຫ້ ແກ່ຄະນະກໍາມະການຄຸ້ມຄອງຂັ້ນເມືອງ ແລະ ຂັ້ນແຂວງ ໃນໂຄງການພັດທະນາຄວາມອາດສາມາດການຄຸ້ມຄອງຂໍ້ມູນ ທີ່ຈັດຕັ້ງປະຕິບັດຮ່ວມກັບກັບ ອົງການ NPA.
3. ໃຫ້ຄວາມສໍາຄັນກ່ຽວກັບພື້ນທີ່ຢືນຢັນວ່າອັນຕະລາຍ CHA ເຂົ້າໃນການຄັດເລືອກບຸລິມະສິດ, ໂດຍນໍາເອົາເງື່ອນໄຂໄປແລກປ່ຽນກັບບັນດາເມືອງ ແລະ ແຂວງ ໃຫ້ເຂົ້າໃຈໂດຍໃຊ້ພື້ນທີ່ຢືນຢັນວ່າອັນຕະລາຍ CHA ເປັນຫຼັກ.
4. ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ກັບບັນດາຄະນະກໍາມະການຄຸ້ມຄອງຂັ້ນແຂວງໃນວຽກງານການຄຸ້ມຄອງຂໍ້ມູນ ຂະແໜງການ ລບຕ.

5. ບັນດາອົງການປະຕິບັດງານ ລບຕ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃຫ້ມີການແລກປ່ຽນຂໍ້ມູນກັນຫຼາຍຂຶ້ນ.
6. ຮ່ວມມືສະໜິດແໜ້ນກັບກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້, ໃຫ້ພາກສ່ວນດັ່ງກ່າວມີສ່ວນຮ່ວມ ໃນການຈັດກິດຈະກຳການຄຸ້ມຄອງຂໍ້ມູນ ແລະ ການວາງແຜນ ທີ່ເປັນບູລິມະສິດໃນການສຳຫຼວດ - ກວດກູ້ ລບຕ.

ກອງປະຊຸມດັ່ງກ່າວ ໄດ້ປິດລົງໃນເວລາ 16:05 ຂອງວັນທີ 29 ພະຈິກ 2022.

**ປະທານກອງປະຊຸມ**

ບຸນເພັງ ສີສະຫວັດ
Mr Bounpheng SISAWATH

**ໜ່ວຍງານຄຸ້ມຄອງຂໍ້ມູນ**